ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ເລກທີ 583 /ພກພ

ທີ່ນະຄອນຫຼວງວຽງຈັນ, ວັນທີ 06/07/2023

ໜັງສືແຈ້ງຕອບ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື.
ທ່ານ ຜູ້ອຳນວຍການໃຫຍ່ ຕລຊລ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.
ບັນດານັກລົງທຶນ ແລະ ຜູ້ຖືຮຸ້ນຂອງບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຜນການແກ້ໄຂການດ້ອຍຄ່າຂອງທຶນຂອງ ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ.

- **ອີງຕາມ** ໜັງສືແຈ້ງການຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການຮັກສາສະຖານະການເປັນບໍລິສັດ ຈົດທະບຽນໃນ ຕລຊລ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ.
- **ອີງຕາມ** ການຕົກລົງເຫັນດີຂອງ ສະພາບໍລິຫານຄັ້ງວັນທີ 23 ມິຖຸນາ 2023

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດລາຍງານມາຍັງທ່ານຊາບກ່ຽວກັບ ແຜນການແກ້ໄຂການດ້ອຍຄ່າຂອງທຶນ ຊຶ່ງໃນໄລຍະ 3 ປີຜ່ານມາ ເກີດມີໂລກລະບາດພະຍາດ COVID 19 ສົ່ງຜົນກະທົບຕໍ່ກັບດຳເນີນງານຂອງບໍລິສັດຕ້ອງຢຸດເຊົາບາງໂຄງການຕາມສະພາບຄວາມເປັນຈິງ. ພ້ອມນັ້ນ, ອີງຕາມ ນະໂຍບາຍບັນຊີຂອງ ບໍລິສັດ ພກພ ແມ່ນຫັກຄ່າເຜື່ອໜີ້ສົງໄສຈະສູນ ສຳລັບໜີ້ຕ້ອງຮັບທາງການຄ້າ ແລະ ອື່ນທີ່ມີຍອດເຫຼືອຄ້າງຊຳລະຫຼາຍກວ່າ 3 ປີ ຈຶ່ງເຮັດໃຫ້ຊັບສິນ ແລະ ທຶນຂອງບໍລິສັດຫຼຸດລົງ ແລະ ເປັນສາເຫດໜຶ່ງທີ່ເຮັດໃຫ້ບໍລິສັດເກີດການດ້ອຍຄ່າຂອງທຶນ. ເຖິງຢ່າງໃດກໍຕາມ, ບໍລິສັດ ພກພ ມີແຜນການແກ້ໄຂການດ້ອຍຄ່າຂອງທຶນ ດັ່ງນີ້:

1. ແຜນການຈັດຕັ້ງປະຕິບັດໃນປີ 2023-2030

1.1. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ເປັນຜູ້ຖືຮຸ້ນບໍ່ຖ່ານຫີນເມືອງວຽງພຸຄາ, ແຂວງຫຼວງນ້ຳທາ ກັບ ບໍລິສັດ ແອວນໍເຕິນພັດທະນາ ຈຳກັດຜູ້ດຽວ ແລະ ບໍລິສັດ ພິນນາເຄີລອິນເສັສເມັນຄາປິໂຕ ຈຳກັດຜູ້ດຽວ ລວມທັງໝົດ 25 % ແລະ ເປັນຜູ້ຮັບເໝົາໃນການຂຸດຄົ້ນບໍ່ຖ່ານຫີນເມືອງວຽງພຸຄາ, ແຂວງຫຼວງນ້ຳທາ. ຕາມສັນຍາຊື້ຂາຍຖ່ານຫີນ 5,000,000 ໂຕນ ມູນຄ່າ 250,000,000 ໂດລາ ເປັນເວລາ 5 ປີ, ບໍລິສັດມີລາຍໄດ້ຈາກການຖືຮຸ້ນສະເລ່ຍ 5 ໂດລາ ຕໍ່ ໂຕນ ຄາດຄະເນລາຍຮັບຈາກການຖືຮຸ້ນ 5,000,000 ໂດລາ ຕໍ່ ປີ, ລາຍຮັບ 12ໂດລາ ຕໍ່ ໂຕນ ຄາດຄະເນລາຍຮັບຈາກການຂຸດຄົ້ນ 12,000,000 ໂດລາ ຕໍ່ປີ, ລວມເປັນ 85 ລ້ານໂດລາ ໃນໄລຍະເວລາ 5 ປີ

1.2. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທຶນ ໂຄງການທາງເວັ້ນຕົວເມືອງດອນໝຸນ ຫາ ບ້ານບົວ ນະຄອນຫຼວງວຽງຈັນ ໃນໄລຍະ 30 ກິໂລແມັດ. ຄາດຄະເນມູນຄ່າການລົງທຶນ 210 ລ້ານໂດລາ ດ້ວຍຜົນຕອບແທນ 10%

1.3. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ລົງທຶນ ໃນພະລັງງານໄຟຟ້າແສງອາທິດ 1000 ເມັກກາວັດ. ຄາດຄະເນມູນຄ່າການລົງທຶນ 800 ລ້ານໂດລາ ດ້ວຍຜົນຕອບແທນ 12,8%

1.4. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ແຜນການສຶກສາການລົງທຶນ ໂຄງການພະລັງງານໄຟຟ້ານ້ຳຕົກ ລວມເປັນ 1150 ເມັກກາວັດ

1.5. ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ກະກຽມປະມູນໂຄງການ ໂຄງກາ

1.5.1. ໂຄງການກໍ່ສ້າງຂົວຂ້າມນ້ຳຂອງ ຫຼວງພະບາງ ດ້ວຍທຶນ NEDA

1.5.2. ໂຄງການກໍ່ສ້າງເສັ້ນທາງ R12 ດ້ວຍທຶນ NIDA

1.5.3. ໂຄງການກໍ່ສ້າງການເຈື່ອນ ແຂວງຫຼວງພະບາງ ດ້ວຍທຶນ EDCF (ປະເທດເກົາຫຼີ)

1.5.4. ໂຄງການກໍ່ສ້າງສະໜາມຂີ້ເຫຍື້ອ ແລະ ທາງຊອຍໃນຕົວເມືອງ ແຂວງຫຼວງພະບາງ ດ້ວຍທຶນ ທະນາຄານໂລກ World Bank

ດ້ວຍເຫດຜົນດັ່ງກ່າວນີ້ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ຄາດຄະເນວ່າຈະສາມາດແຂ້ໄຂ ການ ດ້ອຍຄ່າຂອງທຶນຕາມແຜນ, ສະນັ້ນ ຈຶ່ງຮຽນສະເໜີມາຍັງທ່ານຊ່ວຍພິຈາລະນາ ຕາມທາງຄວນດ້ວຍ

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຜູ້ອຳນວຍການ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ສີທາ ພົມມະຈິດ